ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 174 / ນຍ

ນະຄອນຫລວງວຽງຈັນ, ວັນທີ 03.08.2006

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດ ການສ້າງຄູ ແຕ່ ປີ 2006- 2015 ແລະ ແຜນດຳເນີນງານແຕ່ປີ 2006-2010

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02 / ສພຊ , ລົງວັນທີ 6 ພຶດສະພາ 2003 .
- ອີງຕາມ ກົດໝາຍວ່າດ້ວຍ ການສຶກສາ ສະບັບເລກທີ 09/ສປປ, ລົງວັນທີ 26 ເມສາ 2000 .
- ອີງຕາມ ການສະເໜີຂອງ ລັດຖະມົນຕີວ່າການ ກະຊວງສຶກສາທິການ ສະບັບເລກທີ 455 / ສສ. ສຄ / 06, ລົງວັນທີ 11 ກໍລະກົດ 2006 .

## ນາຍົກລັດຖະມົນຕີ ອອກດຳລັດ

ມາດຕາ 1. ຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດ ການສ້າງຄູ ແຕ່ປີ 2006- 2015 ແລະ ແຜນດຳເນີນງານ ແຕ່ປີ 2006-2010 ສະບັບເດືອນ ສິງຫາ ປີ 2006 ຢ່າງເປັນທາງການ .

ມາດຕາ 2. ມອບໃຫ້ກະຊວງສຶກສາທິການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງ ແລະ ລາຍງານໃຫ້ລັດຖະບານຊາບຢ່າງເປັນໄລຍະ.

ມາດຕາ 3. ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫລວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4. ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ